ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ ເລກທີ 06 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 22 ມັງກອນ 2019

# ມະຕິ

## ຂອງ ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ສັນຍາເຂດການຄ້າເສລີ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ ແລະ ສັນຍາການລົງທຶນ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ

--------------------------

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈຳສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ.
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 174/ນຍ, ລົງວັນທີ 12 ທັນວາ 2018.
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 21 ມັງກອນ 2019.

**ຄະນະປະຈຳສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ສັນຍາເຂດການຄ້າເສລີ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ (ASEAN-HONG KONG, CHINA Free Trade Agreement) ແລະ ສັນຍາການລົງທຶນ ລະຫວ່າງ ອາຊຽນ-ຮົງກົງ, ສປ ຈີນ (ASEAN-HONG KONG, CHINA Investment Agreement).

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ປະທານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ★ ປະທານສະພາແຫ່ງຊາດ ★

ປານີ ຢາທໍ່ຕູ້